ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0974 /ກງ

ນະຄອນຫຼວງວຽງຈັນ, ວັນທີ 01 ເມສາ 2019

# ຂໍ້ຕົກລົງ

## ວ່າດ້ວຍ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ

- ອີງຕາມ ກົດໝາຍວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມໜັງສືສະເໜີຂອງກົມບັນຊີ ສະບັບເລກທີ 193/ກບຊ, ລົງວັນທີ 26 ມີນາ 2019.

## ລັດຖະມົນຕີກະຊວງການເງິນ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂັ້ນຕອນ ການຄຸ້ມຄອງການເຄື່ອນໄຫວວຽກງານຂອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ເພື່ອໃຫ້ວຽກງານດັ່ງກ່າວເປັນເອກະພາບ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ຊຸກຍູ້ໃຫ້ ວິສາຫະກິດກວດສອບ, ນັກກວດສອບຕາມກົດໝາຍ, ອົງການຄຸ້ມຄອງ ແລະ ກວດກາວຽກງານກວດສອບອິດສະລະ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

### ມາດຕາ 2 ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ

ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ແມ່ນ ລະບຽບ, ຂັ້ນຕອນການດຳເນີນງານທາງດ້ານການບໍລິຫານ ແລະ ການເຄື່ອນໄຫວດ້ານການດຳເນີນງານ ເພື່ອຈຸດປະສົງໃນການຄຸ້ມຄອງ ແລະ ກວດກາຄຸນນະພາບຂອງວຽກງານກວດສອບອິດສະລະ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວິສາຫະກິດກວດສອບ** ໝາຍເຖິງ ການຈັດຕັ້ງວິຊາຊີບການກວດສອບ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຈາກກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມລະບຽບກົດໝາຍ;

2. **ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ** ໝາຍເຖິງ ຄະນະທົບທວນຄືນ ທີ່ໄດ້ຮັບການແຕ່ງຕັ້ງ ຈາກກະຊວງການເງິນ ຊຶ່ງປະກອບມີ ຜູ້ທົບທວນຄືນ, ຜູ້ຊ່ວຍຜູ້ທົບທວນຄືນ ແລະ ພະນັກງານບໍລິຫານ;

3. **ສະພາອົງການຄຸ້ມຄອງວຽກງານກວດສອບອິດສະລະສາກົນ (IFIAR)** ໝາຍເຖິງ ສະພາທີ່ເຕົ້າໂຮມອົງການຄຸ້ມຄອງວຽກງານກວດສອບອິດສະລະ ໃນທົ່ວໂລກ ເພື່ອສົ່ງເສີມການຮ່ວມມືໃນການເຄື່ອນໄຫວການຄຸ້ມຄອງວຽກງານກວດສອບ ໃຫ້ສອດຄ່ອງກັນ;

4. **ມາດຕະຖານວິຊາຊີບດ້ານການກວດສອບ** ໝາຍເຖິງ ລະບຽບການ ແລະ ວິທີການປະຕິບັດໃນການເຄື່ອນໄຫວດ້ານວິຊາຊີບບັນຊີ ແລະ ກວດສອບອິດສະລະ ທີ່ສອດຄ່ອງກັບມາດຕະຖານສາກົນ, ໃນນັ້ນ ລວມມີມາດຕະຖານສາກົນດ້ານການຄວບຄຸມຄຸນນະພາບທີໜຶ່ງ (ISQC1), ມາດຕະຖານສາກົນດ້ານການກວດສອບ (ISA) ແລະ ມາດຕະຖານສາກົນດ້ານວຽກງານຮັບປະກັນອື່ນ ແລະ ບໍ່ຮັບປະກັນອື່ນ(ISRE, ISAE, ISRS);

5. **ຜູ້ອຳນວຍການ ຫຼື ຜູ້ຈັດການ** ໝາຍເຖິງ ຜູ້ບໍລິຫານຂອງວິສາຫະກິດກວດສອບ ຊຶ່ງມີຄວາມຮັບຜິດຊອບຢ່າງຕໍ່ເນື່ອງ ໃນການວາງແຜນ ແລະ ການຄຸ້ມຄອງການປະຕິບັດຂໍ້ຜູກພັນ ສຳລັບລູກຄ້າທີ່ກຳນົດໄວ້ສະເພາະ;

6. **ອົງການຄຸ້ມຄອງ** ໝາຍເຖິງ ອົງການຂອງລັດຖະບານ ທີ່ຮັບຜິດຊອບການນຳໃຊ້ມາດຕະການຄວບຄຸມຂະແໜງການສະເພາະໃດໜຶ່ງ ພາຍໃນປະເທດ;

7. **ຜູ້ທົບທວນຄືນ** ໝາຍເຖິງ ບຸກຄົນທີ່ມີຄວາມຮູ້ຄວາມສາມາດ ທາງດ້ານການກວດສອບ ອາດຈະແມ່ນພະນັກງານຂອງກົມບັນຊີ ກະຊວງການເງິນ, ພະນັກງານຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຫຼື ຜູ້ຊ່ຽວຊານ ທີ່ຖືກແຕ່ງຕັ້ງໂດຍກະຊວງການເງິນ ໃຫ້ປະຕິບັດການທົບທວນຄືນຄຸນນະພາບການກວດສອບ;

8. **ແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບ** ໝາຍເຖິງ ແຜນການ ໄລຍະສີ່ປີ ທີ່ສ້າງຂຶ້ນໂດຍກົມບັນຊີ ກະຊວງການເງິນ ເພື່ອຕິດຕາມ ກວດກາຄຸນນະພາບວຽກງານກວດສອບ ຂອງວິສາຫະກິດກວດສອບ, ຊຶ່ງໄດ້ກຳນົດຈຸດປະສົງ, ເປົ້າໝາຍຕົ້ນຕໍ, ຂັ້ນຕອນການດຳເນີນງານ ແລະ ການເຄື່ອນໄຫວ;

9. **ການກວດກາຂໍ້ມູນຢູ່ສຳນັກງານ** ໝາຍເຖິງ ການກວດກາຂໍ້ມູນ ຕາມເອກະສານລາຍງານປະຈຳປີ ແລະ ເອກະສານກ່ຽວຂ້ອງ ທີ່ວິສາຫະກິດກວດສອບ ໄດ້ລາຍງານໃຫ້ກະຊວງການເງິນ ເພື່ອດຳເນີນການກວດກາຄຸນນະພາບວຽກງານກວດສອບເບື້ອງຕົ້ນ ຢູ່ຫ້ອງການ;

10. **ການທົບທວນຄືນການຮັບປະກັນຄຸນນະພາບ** ໝາຍເຖິງ ການກວດກາຄຸນນະພາບໃນການດຳເນີນວຽກງານກວດສອບ ຂອງນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບ ໂດຍໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ຢູ່ວິສາຫະກິດກວດສອບທີ່ຖືກທົບທວນຄືນ ໃນເງື່ອນໄຂ ແລະ ສະພາບແວດລ້ອມການປະຕິບັດວຽກງານ ເພື່ອກວດກາປະສິດທິຜົນຂອງກົງຈັກການຈັດຕັ້ງ ແລະ ລະບຽບການດຳເນີນງານຂອງວິສາຫະກິດກວດສອບ;

11. **ຄ່າບໍລິການກວດກາຄຸນນະພາບການກວດສອບ** ໝາຍເຖິງ ຄ່າບໍລິການສຳລັບການປະຕິບັດງານ ຂອງລະບົບກວດກາຄຸນນະພາບວຽກງານກວດສອບ ຊຶ່ງເປົ້າໝາຍຖືກກວດສອບຕາມກົດໝາຍ ຕ້ອງຊຳລະໂດຍກົງໃຫ້ວິສາຫະກິດກວດສອບ ພ້ອມກັບຊຳລະຄ່າບໍລິການການກວດສອບຕາມກົດໝາຍ;

12. **ລະບົບການຄຸ້ມຄອງກວດກາ** (Oversight System) ໝາຍເຖິງ ລະບຽບ, ຂັ້ນຕອນ ແລະ ອົງການຈັດຕັ້ງທີ່ໄດ້ກຳນົດສະເພາະ ເພື່ອຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງນັກກວດສອບ ແລະ ວິສາຫະກິດກວດສອບ ສະເພາະປະເທດໃດໜຶ່ງ;

13. **ພັນທະການເປັນສະມາຊິກ ເງື່ອນໄຂທີໜຶ່ງ (SMO1-Statement of Membership)** ໝາຍເຖິງ ເງື່ອນໄຂການເປັນສະມາຊິກຂອງສະຫະພັນນັກບັນຊີສາກົນ ທີ່ກຳນົດຫຼັກການ ແລະ ຂັ້ນຕອນຂອງການຮັບປະກັນຄຸນນະພາບການກວດສອບ.

**ມາດຕາ 4 ຫຼັກການກ່ຽວກັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ**

ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນໃຫ້ການກວດສອບຕາມກົດໝາຍ ມີຄຸນນະພາບສູງຢ່າງໜ້າເຊື່ອຖືໄດ້;
2. ປະກອບສ່ວນເຂົ້າໃນການສ້າງສະຖຽນລະພາບທາງດ້ານການເງິນ ໃນ ສປປ ລາວ;
3. ຈຳແນກປັດໄຈດ້ານຄຸນນະພາບ ສຳລັບວຽກງານຂອງນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບໃນ ສປປ ລາວ;
4. ຮັບປະກັນໃຫ້ສອດຄ່ອງກັບຂອບຂ່າຍຄຸນນະພາບ ຂອງສະພາມາດຕະຖານສາກົນ ດ້ານການກວດສອບ ແລະ ການຮັບປະກັນ, ພັນທະການເປັນສະມາຊິກ ເງື່ອນໄຂທີໜຶ່ງ (SMO1) ແລະ ຫຼັກການພື້ນຖານຂອງສະພາອົງການຄຸ້ມຄອງວຽກງານກວດສອບອິດສະລະສາກົນ (IFIAR) ລວມທັງລະບຽບການໃນການປະຕິບັດວຽກງານກວດສອບ ທີ່ດີທີ່ສຸດໃນປະເທດຕ່າງໆ ທີ່ໄດ້ເລືອກເຟັ້ນແລ້ວ;
5. ເປັນທີ່ຮັບຮູ້ເທົ່າທຽມກັບລະບົບການຄຸ້ມຄອງກວດກາອື່ນ ໃນອາຊຽນ ແລະ ປະເທດອື່ນ ເທື່ອລະກ້າວ;
6. ມີຄວາມໂປ່ງໃສ ແລະ ເປັນເອກະລາດຈາກນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບ;
7. ສ້າງການເຊື່ອມຕໍ່ ແລກປ່ຽນຂໍ້ມູນ ລະຫວ່າງຜູ້ຄຸ້ມຄອງ;
8. ບໍ່ໃຫ້ອົງການຄຸ້ມຄອງ ປະຕິບັດໜ້າທີ່ຊໍ້າຊ້ອນກັນ;
9. ສາມາດດັດປັບ ແລະ ພັດທະນາ ເພື່ອໃຫ້ນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບນຳໃຊ້ໄດ້;
10. ມີປະສິດທິຜົນທາງດ້ານຕົ້ນທຶນ ເພື່ອໃຫ້ສາມາດດຳເນີນງານ ແລະ ຈັດຕັ້ງປະຕິບັດຢ່າງ ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງຕະຫຼອດໄປ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບການເຄື່ອນໄຫວວຽກງານກວດສອບອິດສະລະ, ອົງການຄຸ້ມຄອງ ແລະ ກວດກາວຽກງານກວດສອບອິດສະລະ, ເປົ້າໝາຍຖືກກວດສອບ, ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ແລະ ອົງການຄຸ້ມຄອງອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການຄຸ້ມຄອງລະບົບການຮັບປະກັນຄຸນນະພາບວຽກງານການກວດສອບ

**ມາດຕາ 6 ການຄຸ້ມຄອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ**

ການຄຸ້ມຄອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ແມ່ນ ການຈັດຕັ້ງປະຕິບັດລະບຽບການ ແລະ ຂັ້ນຕອນ ໃນການຕິດຕາມ ແລະ ກວດກາ ການເຄື່ອນໄຫວດ້ານບໍລິຫານ ແລະ ດຳເນີນງານ ລວມທັງ

ການກວດກາຂໍ້ມູນຢູ່ສຳນັກງານ, ການທົບທວນຄືນການຮັບປະກັນຄຸນນະພາບ ແລະ ການສຶກສາອົບຮົມ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ອົງປະກອບຂອງການຄຸ້ມຄອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ**

ອົງປະກອບຂອງການຄຸ້ມຄອງລະບົບຮັບປະກັນຄຸນນະພາບວຽກງານກວດສອບ ປະກອບມີ ດັ່ງນີ້:

1. ຂັ້ນຕອນການຈັດຕັ້ງປະຕິບັດງານ ຂອງລະບົບຮັບປະກັນຄຸນນະພາບວຽກງານກວດສອບ ແລະ ແຫຼ່ງທຶນ;
2. ແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບດ້ານການບໍລິຫານ;
3. ການກວດກາຂໍ້ມູນຢູ່ສຳນັກງານ;
4. ການທົບທວນຄືນການຮັບປະກັນຄຸນນະພາບ;
5. ການສຶກສາອົບຮົມ;
6. ຄະນະກຳມະການທີ່ປຶກສາລະບົບຮັບປະກັນຄຸນນະພາບວຽກງານກວດສອບ.

## ໝວດທີ 3
## ຂັ້ນຕອນການຈັດຕັ້ງປະຕິບັດງານຂອງ ລະບົບຮັບປະກັນຄຸນນະພາບວຽກງານກວດສອບ ແລະ ແຫຼ່ງທຶນ

**ມາດຕາ 8 ຂັ້ນຕອນການປະຕິບັດງານຂອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ**

ຂັ້ນຕອນການປະຕິບັດງານ ຂອງລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ມີ ດັ່ງນີ້:

1. ປະສານສົມທົບກັບອົງການຄຸ້ມຄອງວຽກງານກວດສອບອິດສະລະ ໂດຍສອດຄ່ອງກັບພາລະບົດບາດໜ້າທີ່ ໂດຍຜ່ານຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ;
2. ກຳນົດ ແລະ ປັບປຸງປັດໄຈວັດແທກຄຸນນະພາບວຽກງານກວດສອບ;
3. ຮັບປະກັນຄຸນນະພາບ ການເຄື່ອນໄຫວວຽກງານຂອງນັກກວດສອບຕາມກົດໝາຍ ແລະ ວິສາຫະກິດກວດສອບ ໂດຍຜ່ານການປະຕິບັດແຜນການຕິດຕາມກວດກາ.

**ມາດຕາ 9 ແຫຼ່ງທຶນ ສຳລັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ**

ແຫຼ່ງທຶນສຳລັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ໄດ້ມາຈາກຄ່າບໍລິການກວດກາຄຸນນະພາບການກວດສອບ ຈາກເປົ້າໝາຍຖືກກວດສອບຕາມກົດໝາຍ ທີ່ເປັນລູກຄ້າຂອງວິສາຫະກິດກວດສອບຕາມແຕ່ລະສັນຍາວຽກງານກວດສອບ ໃນປີການບັນຊີ.

ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເປັນຜູ້ຮັກສາ ແລະ ຄຸ້ມຄອງ ແຫຼ່ງທຶນ ສຳລັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ເພື່ອຮັບປະກັນການສະໜອງທຶນໃຫ້ແກ່ການເຄື່ອນໄຫວວຽກງານ, ການນຳໃຊ້ຊັບພະຍາກອນມະນຸດ ແລະ ຊ່ຽວຊານສະເພາະ ຢ່າງເໝາະສົມ ໂດຍປະສານສົມທົບກັບຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

ທຸກລາຍຈ່າຍ ຈາກແຫຼ່ງທຶນດັ່ງກ່າວ ຕ້ອງຖືກນຳໃຊ້ໃຫ້ສອດຄ່ອງກັບແຜນຕິດຕາມກວດກາ ທີ່ປະທານຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ຮັບຮອງ.

ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ຕ້ອງສົ່ງບົດລາຍງານ ການຄຸ້ມຄອງແຫຼ່ງທຶນ ປະຈຳປີ ໃຫ້ກົມບັນຊີ ກະຊວງການເງິນ ກ່ອນວັນທີ 31 ພຶດສະພາ. ຈາກນັ້ນ, ກົມບັນຊີ ສົ່ງໃຫ້ຄະນະກຳມະການທີ່ປຶກສາລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ເພື່ອປະກອບຄຳເຫັນ.

ຂັ້ນຕອນ ແລະ ລະບຽບການຄຸ້ມຄອງ ການເກັບ ແລະ ນຳໃຊ້ທຶນ ສຳລັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ມອບໃຫ້ຄະນະກຳມະການທີ່ປຶກສາ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເປັນຜູ້ກຳນົດ.

ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ ສາມາດກວດສອບ ບົດລາຍງານການຄຸ້ມຄອງແຫຼ່ງທຶນສຳລັບລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

## ໝວດທີ 4
## ແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບດ້ານການບໍລິຫານ

### ມາດຕາ 10 ແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບດ້ານການບໍລິຫານ

ແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບດ້ານການບໍລິຫານ ແມ່ນ ການສ້າງແຜນຕິດຕາມກວດກາຄຸນນະພາບວຽກງານກວດສອບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ບົນພື້ນຖານການສັງລວມ ແລະ ວິເຄາະຂໍ້ມູນ ເພື່ອສ້າງ ແລະ ປະຕິບັດແຜນການຕິດຕາມກວດກາ ການເຄື່ອນໄຫວຂອງວິສາຫະກິດກວດສອບ.

### ມາດຕາ 11 ການລາຍງານຂອງວິສາຫະກິດກວດສອບ

ວິສາຫະກິດກວດສອບ ຕ້ອງປະກອບຂໍ້ມູນໃສ່ ແບບສອບຖາມ ບົດລາຍງານຜົນການເຄື່ອນໄຫວວຽກງານປະຈຳປີຂອງຕົນ ຕາມແບບຟອມຂອງກົມບັນຊີ ກະຊວງການເງິນ ທຸກປີ ພາຍໃນກຳນົດ ເກົ້າສິບ ວັນ ນັບແຕ່ວັນປິດບັນຊີປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍ ວ່າດ້ວຍການກວດສອບອິດສະລະ.

ແບບສອບຖາມ ບົດລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນທົ່ວໄປ;
2. ການເຄື່ອນໄຫວ;
3. ບຸກຄະລາກອນ;
4. ລະບົບການຮັບປະກັນຄຸນນະພາບ;
5. ການລາຍງານປະຈຳປີ ກ່ຽວກັບ ຜົນການປະຕິບັດວຽກງານກວດສອບ.

ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ສາມາດນຳໃຊ້ຂໍ້ມູນຂ່າວ ສານຂ້າງເທິງນີ້ ເຂົ້າໃນວຽກງານຂອງຕົນ ເພື່ອ:

- ໄດ້ສະຖິຕິດ້ານວິຊາຊີບ;
- ຕິດຕາມ, ກວດກາ, ຄຸນນະພາບວຽກງານກວດສອບຕະຫຼອດທຸກປີ;
- ຈຳແນກບັນຫາທີ່ເກີດຂຶ້ນ ຈາກການປະຕິບັດວຽກງານກວດສອບ;
- ຮັບປະກັນການບັງຄັບໃຊ້ລະບຽບການ ກ່ຽວກັບ ການກວດສອບໃນ ສປປ ລາວໃຫ້ຖືກຕ້ອງ;
- ປະກອບສ່ວນສ້າງສະຖຽນລະພາບທາງດ້ານການເງິນ ໃນ ສປປ ລາວ ໂດຍຈຳແນກຄວາມສ່ຽງ ທີ່ອາດຈະເກີດຂຶ້ນຈາກຄວາມຫຼົ້ມເຫຼວ ຂອງການກວດສອບ;

- ກະກຽມການທົບທວນຄືນຄຸນນະພາບວຽກງານກວດສອບ ປະຈຳປີ ຂອງວິສາຫະກິດກວດສອບ.

**ມາດຕາ 12 ການສ້າງແຜນການຕິດຕາມກວດກາ**

ກົມບັນຊີ ກະຊວງການເງິນ ປະສານສົມທົບກັບ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເພື່ອສ້າງແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບ ບົນພື້ນຖານບົດລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ ຂອງວິສາຫະກິດກວດສອບ ສັງລວມລາຍງານໃຫ້ຄະນະກຳມະການ ທີ່ປຶກສາລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ພິຈາລະນາ.

ການສ້າງແຜນການຕິດຕາມກວດກາວຽກງານກວດສອບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ກຳນົດວິສາຫະກິດກວດສອບທຸກຫົວໜ່ວຍ ເຂົ້າໃນແຜນການຕິດຕາມ;
2. ກວດກາຢ່າງຕໍ່ເນື່ອງ ກ່ຽວກັບ ຄຸນນະພາບວຽກງານກວດສອບ ແລະ ຄວາມສ່ຽງທີ່ຈະຫຼົ້ມເຫຼວດ້ານການກວດສອບ ຂອງວິສາຫະກິດກວດສອບ;
3. ທົບທວນຄືນຄຸນນະພາບການກວດສອບ ຂອງວິສາຫະກິດກວດສອບ ທີ່ດຳເນີນການກວດສອບເອກະສານລາຍງານການເງິນ ຂອງວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ເປັນຮອບວຽນທຸກ ສາມປີ;
4. ທົບທວນຄືນຄຸນນະພາບວຽກງານກວດສອບ ຂອງວິສາຫະກິດກວດສອບ ທີ່ດຳເນີນການກວດສອບເອກະສານລາຍງານການເງິນ ຂອງວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ເປັນຮອບວຽນທຸກ ສີ່ປີ;
5. ນຳໃຊ້ວິທີການຕາມພື້ນຖານຄວາມສ່ຽງ ເຂົ້າໃນການຄັດເລືອກວິສາຫະກິດກວດສອບ;
6. ສຶກສາອົບຮົມວິສາຫະກິດກວດສອບ ທີ່ບໍ່ປະຕິບັດຈັນຍາບັນ ແລະ ມາດຕະຖານວິຊາຊີບອື່ນ;
7. ກຳນົດງົບປະມານ ຄ່າໃຊ້ຈ່າຍ ໃຫ້ພຽງພໍກ່ອນຈະເລີ່ມກິດຈະກຳທັງໝົດ ຂອງແຜນການຕິດຕາມກວດກາ ຕະຫຼອດໄລຍະເວລາດຳເນີນແຜນການ;
8. ຮັບປະກັນການທົບທວນຄືນແຜນການຕິດຕາມກວດກາທຸກປີ ແລະ ປັບປຸງຄືນ ຖ້າມີຄວາມຈຳເປັນ.

**ມາດຕາ 13 ການຮັບຮອງແຜນການຕິດຕາມກວດກາ**

ກົມບັນຊີ ກະຊວງການເງິນ ຕ້ອງປຶກສາຫາລືກັບຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ປະກອບຄຳຄິດເຫັນ ແລະ ທົບທວນຄືນຂໍ້ແນະນຳ. ຫຼັງຈາກນັ້ນ ກົມບັນຊີ ກະຊວງການເງິນ ສະເໜີປະທານຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ເພື່ອຮັບຮອງ; ໃນກໍລະນີ ມີການປັບປຸງແຜນການຕິດຕາມກວດກາ ຕ້ອງໄດ້ດຳເນີນການຮັບຮອງແຜນຄືນໃໝ່.

ພາຍຫຼັງມີການຮັບຮອງແຜນການຕິດຕາມກວດກາ ຄຸນນະພາບວຽກງານກວດສອບແລ້ວ, ຄະນະກຳມະການທີ່ປຶກສາລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ຕ້ອງເຜີຍແຜ່ແຜນການ ໃນເວບໄຊຂອງຕົນ.

**ມາດຕາ 14 ການລາຍງານກິດຈະກຳແຜນການຕິດຕາມກວດກາ**

ການລາຍງານກິດຈະກຳແຜນການຕິດຕາມກວດກາ ປະກອບດ້ວຍ ວຽກຕົ້ນຕໍ ດັ່ງນີ້:

1. ການອະທິບາຍຍຸດທະສາດການດຳເນີນກິດຈະກຳແຜນການຕິດຕາມກວດກາ;
2. ການປະຕິບັດກິດຈະກຳຕົວຈິງ ແລະ ການລາຍງານ ກ່ຽວກັບຂໍ້ຫຍຸ້ງຍາກທີ່ໄດ້ຄົ້ນພົບ;
3. ຂໍ້ມູນທີ່ພົບເຫັນ ແລະ ຜົນໄດ້ຮັບ, ການຈຳແນກຂໍ້ບົກຜ່ອງ ແລະ ຄວາມສ່ຽງ;
4. ການແນະນຳແຜນການຕິດຕາມກວດກາ ແລະ ມາດຕະການແກ້ໄຂ ຄັ້ງຕໍ່ໄປ.

**ມາດຕາ 15 ການຮ່າງບົດລາຍງານ ກ່ຽວກັບ ການປະຕິບັດກິດຈະກຳແຜນການຕິດຕາມກວດກາ**

ພາຍຫຼັງສຳເລັດການປະຕິບັດກິດຈະກຳແຜນການຕິດຕາມກວດກາ, ກົມບັນຊີ ກະຊວງການເງິນ ປະສານສົມທົບກັບ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ກະກຽມຮ່າງບົດລາຍງານການເຄື່ອນໄຫວແຜນການຕິດຕາມກວດກາ ເພື່ອສະເໜີໃຫ້ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ປະກອບຄຳເຫັນ ແລະ ໃຫ້ຄຳແນະນຳ.

ໃນກໍລະນີ ມີການລາຍງານກາງໄລຍະ ກໍໃຫ້ປະຕິບັດການລາຍງານ ຕາມວິທີການຂ້າງເທິງນີ້.

**ມາດຕາ 16 ການຮັບຮອງບົດລາຍງານແຜນການຕິດຕາມກວດກາ**

ພາຍຫຼັງປຶກສາຫາລືກັບ ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ກົມບັນຊີ ກະຊວງການເງິນ ຕ້ອງສັງລວມ ຄຳຄິດເຫັນ ແລະ ຄຳແນະນຳ ຂອງບັນດາສະມາຊິກໃນຄະນະກຳມະການ ເພື່ອປະກອບເຂົ້າໃນບົດລາຍງານ, ແລ້ວສະເໜີປະທານ ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ເພື່ອຮັບຮອງ.

**ມາດຕາ 17 ການເຜີຍແຜ່ບົດລາຍງານແຜນການຕິດຕາມກວດກາ**

ພາຍຫຼັງໄດ້ຮັບຮອງບົດລາຍງານແຜນການຕິດຕາມກວດກາແລ້ວ ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ຕ້ອງເຜີຍແຜ່ບົດລາຍງານ ໃນເວບໄຊຂອງຕົນ.

## ໝວດທີ 5
## ການກວດກາຂໍ້ມູນຢູ່ສຳນັກງານ

**ມາດຕາ 18 ການກວດກາຂໍ້ມູນຢູ່ສຳນັກງານ**

ການກວດກາຂໍ້ມູນຢູ່ສຳນັກງານ ມີ ດັ່ງນີ້:

1. ການເຄື່ອນໄຫວຂອງວິສາຫະກິດກວດສອບ;
2. ຄວາມສອດຄ່ອງກັບລະບຽບການດ້ານການກວດສອບ, ຈັນຍາບັນ ແລະ ມາດຕະຖານດ້ານວິຊາຊີບ;
3. ບັນຫາຕ່າງໆທີ່ອາດເກີດຂຶ້ນໃນຂະແໜງການເສດຖະກິດ ກ່ຽວຂ້ອງກັບການກວດສອບ;
4. ຄວາມສ່ຽງ ແລະ ຂໍ້ຜິດພາດດ້ານການກວດສອບ ທີ່ອາດເກີດຂຶ້ນ.

ສຳລັບວິສາຫະກິດກວດສອບ ທີ່ດຳເນີນວຽກງານກວດສອບ ໃຫ້ກັບວິສາຫະກິດບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງຖືກທົບທວນຄືນ ໂດຍຜ່ານການກວດກາຂໍ້ມູນຢູ່ສຳນັກງານ.

**ມາດຕາ 19 ການດຳເນີນການກວດກາ**

ກົມບັນຊີ ກະຊວງການເງິນ ຕ້ອງດຳເນີນການກວດກາຂໍ້ມູນຢູ່ສຳນັກງານ ທຸກປີ. ໃນນີ້ ມີການປະມວນຂໍ້ມູນ ແລະ ການວິເຄາະແບບສອບຖາມ ການລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ ຂອງວິສາຫະກິດກວດສອບ ເພື່ອໄຈ້ແຍກໃຫ້ເຫັນຄວາມບໍ່ສອດຄ່ອງ ແລະ ຄວາມສ່ຽງ ແລະ ປະເມີນຄວາມສຳຄັນໂດຍທຽບຖານສຳລັບການປະຕິບັດງານຕໍ່ໄປ.

ກໍລະນີ ການກວດກາ ຫາກພົບເຫັນຂໍ້ມູນທີ່ສິງໃສ ວ່າມີຄວາມສ່ຽງຕໍ່ຄຸນນະພາບການກວດສອບ, ກົມບັນຊີ ກະຊວງການເງິນ ຕ້ອງແຈ້ງໃຫ້ວິສາຫະກິດກວດສອບຊາບ ຢ່າງເປັນລາຍລັກອັກສອນ ເພື່ອສະໜອງຂໍ້ມູນເພີ່ມເຕີມ ແລະ ວິສາຫະກິດກວດສອບນັ້ນ ຕ້ອງແຈ້ງຕອບເປັນລາຍລັກອັກສອນຕາມເວລາທີ່ກຳນົດໄວ້.

ກໍລະນີຄຳຕອບຂອງວິສາຫະກິດກວດສອບ ຫາກສະໜອງຂໍ້ມູນບໍ່ຊັດເຈນ ເພື່ອຊີ້ແຈງຂໍ້ສົງໃສຂ້າງເທິງນັ້ນ, ກົມບັນຊີ ກະຊວງການເງິນ ຈະດຳເນີນການກວດກາແບບແຍກ ຫຼື ແບບປະສົມ ຕາມຮູບແບບການກວດກາ ດັ່ງນີ້:

1. ດຳເນີນການກວດກາກັບທີ່ ບົນພື້ນຖານການສະໜອງຂໍ້ມູນບໍ່ຊັດເຈນ ໂດຍແຈ້ງກ່ຽວກັບການດຳເນີນການກວດກາກັບທີ່ ໃຫ້ແກ່ວິສາຫະກິດກວດສອບນັ້ນ;

2. ດຳເນີນການທົບທວນຄືນຄຸນນະພາບການກວດສອບ.

**ມາດຕາ 20 ພັນທະຂອງວິສາຫະກິດກວດສອບຕໍ່ກັບການກວດກາຂໍ້ມູນຢູ່ສຳນັກງານ**

ພັນທະຂອງວິສາຫະກິດກວດສອບ ຕໍ່ກັບການກວດກາຂໍ້ມູນຢູ່ສຳນັກງານ ມີ ດັ່ງນີ້:

1. ລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ ຂອງວິສາຫະກິດກວດສອບ ຕາມແບບສອບຖາມ ໃນແຕ່ລະໄລຍະ;

2. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ບັນຊີ;

3. ສະໜອງຂໍ້ມູນຂ່າວສານ ຕາມໄລຍະເວລາທີ່ ກົມບັນຊີ ກະຊວງການເງິນ ກຳນົດໄວ້.

4. ສະໜອງຂໍ້ມູນຂ່າວສານ ແລະ ເອກະສານທີ່ຈຳເປັນ ໂດຍບໍ່ອ້າງເຖິງການຮັກສາຄວາມລັບທາງດ້ານວິຊາຊີບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ຂໍ້ມູນຂ່າວສານທີ່ຕ້ອງສະໜອງ ກ່ຽວພັນກັບຄວາມລັບຂອງວິສາຫະກິດກວດສອບ ຫຼື ເປັນຂໍ້ມູນທີ່ລະອຽດອ່ອນ, ຕ້ອງປະຕິບັດຕາມຂັ້ນຕອນການດຳເນີນງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 21 ການລາຍງານຜົນການກວດກາຂໍ້ມູນຢູ່ສຳນັກງານ**

ກົມບັນຊີ ກະຊວງການເງິນ ສົ່ງບົດສະຫຼຸບ ແລະ ຜົນການປະເມີນຈາກການກວດກາຂໍ້ມູນ ໃຫ້ວິສາຫະກິດກວດສອບປະກອບຄຳເຫັນ.

ວິສາຫະກິດກວດສອບ ຕ້ອງໃຫ້ຄຳເຫັນເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບຈາກວັນໄດ້ຮັບບົດສະຫຼຸບ. ຈາກນັ້ນ, ກົມບັນຊີ ຕ້ອງປັບປຸງບົດສະຫຼຸບ ແລະ ຜົນການປະເມີນຂັ້ນສຸດທ້າຍ ພາຍໃນກຳນົດເວລາ ສາມສິບ ວັນ ນັບຈາກວັນໄດ້ຮັບການປະກອບຄຳເຫັນເປັນລາຍລັກອັກສອນ ຈາກວິສາຫະກິດກວດສອບ.

ຜົນການປະເມີນຈາກການກວດກາຂໍ້ມູນຢູ່ສຳນັກງານ ຕ້ອງລາຍງານໃຫ້ກັບຄະນະກຳມະການທີ່ປຶກສາລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ພ້ອມທັງປະກອບເຂົ້າໃນບົດລາຍງານການເຄື່ອນໄຫວການຕິດຕາມກວດກາ.

## ໝວດທີ 6
## ການທົບທວນຄືນການຮັບປະກັນຄຸນນະພາບ

**ມາດຕາ 22 ການທົບທວນຄືນການຮັບປະກັນຄຸນນະພາບ**

ການທົບທວນຄືນການຮັບປະກັນຄຸນນະພາບ ແມ່ນ ການດຳເນີນວຽກງານ ການກວດສອບຕາມກົດໝາຍ ແລະ ການກວດສອບຕາມຄວາມສະໝັກໃຈ ຂອງວິສາຫະກິດກວດສອບ ລວມທັງການບໍລິການທີ່ກ່ຽວຂ້ອງກັບແຕ່ລະການກວດສອບຕາມກົດໝາຍ.

ແຜນງານການທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງດຳເນີນການຕາມຂອບເຂດ ດັ່ງນີ້:

1. ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຄຸ້ມຄອງ ການກວດສອບ ຕາມກົດໝາຍ ແລະ ຕາມຄວາມສະໝັກໃຈ;

2. ຈັນຍາບັນສຳລັບນັກວິຊາຊີບການບັນຊີ;

3. ມາດຕະຖານວິຊາຊີບດ້ານການກວດສອບທີ່ມີຜົນບັງຄັບໃຊ້ໃນປີທີ່ໄດ້ມີການດຳເນີນວຽກງານກວດສອບ.

### ມາດຕາ 23 ວິທີການປະຕິບັດການທົບທວນຄືນການຮັບປະກັນຄຸນນະພາບ

ການທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງປະຕິບັດ ໂດຍປະສົມປະສານ ສອງວິທີການຕໍ່ໄປນີ້:

1. **ວິທີການທົ່ວໄປ**

- ກວດກາ ຄວາມເປັນຈິງ ແລະ ປະສິດທິຜົນ ຂອງກົງຈັກການຈັດຕັ້ງພາຍໃນຂອງວິສາຫະກິດກວດສອບ, ຂັ້ນຕອນການປະຕິບັດວຽກງານ, ການຄວບຄຸມຄຸນນະພາບພາຍໃນ ເພື່ອປະເມີນການຮັບປະກັນຄຸນນະພາບຂອງວຽກງານການກວດສອບ ທີ່ໄດ້ດຳເນີນງານ;
- ກວດກາປະສິດທິຜົນຂອງການນຳໃຊ້ ຂັ້ນຕອນດຳເນີນງານ ແລະ ການຄວບຄຸມຄຸນນະພາບພາຍໃນຂອງແຕ່ລະວຽກງານການກວດສອບ ທີ່ຖືກຄັດເລືອກເຂົ້າໃນກຸ່ມຕົວຢ່າງ ຈາກຕົວແທນການເຄື່ອນໄຫວວຽກງານ ຂອງວິສາຫະກິດກວດສອບ;
- ກວດກາການຮັບປະກັນຄວາມຖືກຕ້ອງຂອງການດຳເນີນວຽກງານກວດສອບ ຈາກຜູ້ຮຸ້ນສ່ວນຮັບຜິດຊອບງານ ສຳລັບວຽກງານກວດສອບ ທີ່ຖືກຄັດເລືອກພາຍໃນກຸ່ມຕົວຢ່າງ.

2. **ວິທີການ ຕາມພື້ນຖານຄວາມສ່ຽງ**

- ຄວາມສ່ຽງຂອງວິສາຫະກິດກວດສອບ" ທີ່ໄດ້ຖືກຈຳແນກຜ່ານການກວດກາຂໍ້ມູນຢູ່ສຳນັກງານ ຫຼື ໃນໄລຍະການທົບທວນຄືນຄຸນນະພາບການກວດສອບ;
- ຄວາມສ່ຽງຂອງຂະແໜງການເສດຖະກິດ" ຂອງລູກຄ້າກວດສອບຂອງວິສາຫະກິດກວດສອບ.

ໃນກໍລະນີ ທີ່ຕ້ອງມີການທົບທວນຄືນວິສາຫະກິດກວດສອບໃດໜຶ່ງ, ຊຶ່ງຕ້ອງເຜີຍແຜ່ບົດລາຍງານຄວາມໂປ່ງໃສ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍ ການກວດສອບອິດສະລະ, ການທົບທວນຄືນດັ່ງກ່າວ ຕ້ອງສຸມໃສ່ຄວາມສອດຄ່ອງຂອງບົດລາຍງານ ກັບຜົນການປະເມີນຈາກຜູ້ທົບທວນຄືນ.

ການທົບທວນຄືນການຮັບປະກັນຄຸນນະພາບການກວດສອບ ສາມາດກຳນົດເປົ້າໝາຍວຽກງານການກວດສອບສະເພາະ ຕາມການສະເໜີຂອງອົງການຄຸ້ມຄອງສະເພາະ ທີ່ເປັນສະມາຊິກຂອງຄະນະກຳມະການທີ່ປຶກສາລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

ການທົບທວນຄືນຄຸນນະພາບການກວດສອບ ແມ່ນ ເພື່ອເກັບກຳຂໍ້ມູນຂອງວິສາຫະກິດກວດສອບຢ່າງຕໍ່ເນື່ອງ ຕະຫຼອດໄລຍະເວລາແຜນການຕິດຕາມກວດກາ ກ່ຽວກັບ ວິທີການບໍລິຫານວຽກງານ, ຂັ້ນຕອນດຳເນີນງານ ແລະ ການຄວບຄຸມຄຸນນະພາບພາຍໃນ.

### ມາດຕາ 24 ພັນທະຂອງວິສາຫະກິດກວດສອບຕໍ່ກັບການທົບທວນຄືນ

ພັນທະຂອງວິສາຫະກິດກວດສອບ ຕໍ່ກັບການທົບທວນຄືນ ມີ ດັ່ງນີ້:

1. ໃຫ້ການຮ່ວມມືກັບໜ່ວຍງານທົບທວນຄືນ;
2. ສະໜອງຂໍ້ມູນຂ່າວສານ ແລະ ເອກະສານທີ່ຈຳເປັນ ຕາມກຳນົດເວລາ ໂດຍບໍ່ໃຫ້ອ້າງອີງໃສ່ການຮັກສາຄວາມລັບດ້ານວິຊາຊີບ;
3. ອຳນວຍຄວາມສະດວກສະຖານທີ່ໃຫ້ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ເພື່ອເກັບຮັກສາເອກະສານການກວດສອບ ແລະ ອຸປະກອນເຕັກໂນໂລຊີ ໃຫ້ປອດໄພ.

### ມາດຕາ 25 ຮອບເວລາ ແລະ ໄລຍະຂອງການທົບທວນຄືນການຮັບປະກັນຄຸນນະພາບ

ຕາມກົດໝາຍ ວ່າດ້ວຍ ການກວດສອບອິດສະລະ ແລະ ພັນທະການເປັນສະມາຊິກ ເງື່ອນໄຂທີໜຶ່ງ (SMO1), ວິສະຫະກິດກວດສອບ ທີ່ມີລູກຄ້າເປັນວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງໄດ້ຮັບການທົບທວນຄືນຢ່າງໜ້ອຍ ທຸກສາມປີ, ສ່ວນວິສາຫະກິດກວດສອບອື່ນ ແມ່ນຢ່າງໜ້ອຍ ທຸກສີ່ປີ.

ວິສາຫະກິດກວດສອບ ທີ່ໄດ້ຮັບການທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງໄດ້ຮັບແຈ້ງການລ່ວງໜ້າ ກ່ຽວກັບ ການທົບທວນຄືນ.

ໄລຍະເວລາຂອງການທົບທວນຄືນການຮັບປະກັນຄຸນນະພາບ ແມ່ນ ຂຶ້ນກັບຂະໜາດຂອງວິສາຫະກິດກວດສອບ ທີ່ຖືກທົບທວນຄືນ ແລະ ປະເພດຂອງຂໍ້ຜູກພັນໃນສັນຍາ ທີ່ໄດ້ເຊັນຮ່ວມກັນກັບລູກຄ້າ.

ໄລຍະເວລາເປັນຊົ່ວໂມງ ຈະຖືກກຳນົດຕາມຈຳນວນຂໍ້ຜູກພັນໃນສັນຍາທີ່ມີ ແລະ ປັດໃຈຄວາມສ່ຽງທີ່ໄດ້ຖືກຈຳແນກອອກມາ ຜ່ານວິທີການຕາມພື້ນຖານຄວາມສ່ຽງ.

### ມາດຕາ 26 ການຄັດເລືອກວິສາຫະກິດກວດສອບທີ່ຖືກທົບທວນຄືນ

ການຄັດເລືອກວິສາຫະກິດກວດສອບ ທີ່ຖືກທົບທວນຄືນ ຕ້ອງປະຕິບັດຕາມແບບວິທີປະສົມ ຊຶ່ງປະກອບດ້ວຍ ພື້ນຖານຮອບວຽນ ແລະ ຄວາມສ່ຽງ ເພື່ອໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

ການຄັດເລືອກວິສາຫະກິດກວດສອບ ຕ້ອງອີງໃສ່ຜົນຂອງການທົບທວນຄືນການຮັບປະກັນຄຸນນະພາບຜ່ານມາ ແລະ ການກວດກາຂໍ້ມູນຢູ່ສຳນັກງານ.

### ມາດຕາ 27 ຂັ້ນຕອນການທົບທວນຄືນການຮັບປະກັນຄຸນນະພາບ

ຂັ້ນຕອນການທົບທວນຄືນການຮັບປະກັນຄຸນນະພາບ ມີ ດັ່ງນີ້:

1. ລວບລວມຂໍ້ມູນເບື້ອງຕົ້ນຈາກວິສາຫະກິດກວດສອບ ແລະ ຈາກພາກສ່ວນທີ່ກ່ຽວຂ້ອງ;
2. ສ້າງແຜນວຽກການທົບທວນຄືນ;
3. ດຳເນີນການກວດກາກັບທີ່;
4. ກະກຽມຮ່າງບົດລາຍງານທົບທວນຄືນ;
5. ປະກອບຄຳເຫັນໃສ່ຮ່າງບົດລາຍງານການທົບທວນຄືນ;
6. ສ້າງບົດລາຍງານການທົບທວນຄືນ ສະບັບສົມບູນ.

### ມາດຕາ 28 ເງື່ອນໄຂຂອງສະມາຊິກ ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ

ເງື່ອນໄຂຂອງສະມາຊິກ ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ມີ ດັ່ງນີ້:

1. ການສຶກສາດ້ານວິຊາຊີບທີ່ເໝາະສົມ;
2. ປະສົບການດ້ານວິຊາຊີບທີ່ກ່ຽວຂ້ອງ;
3. ໄດ້ຜ່ານການຝຶກອົບຮົມສະເພາະ ກ່ຽວກັບ ການປະຕິບັດການທົບທວນຄືນການຮັບປະກັນຄຸນນະພາບ.

ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງໄດ້ຮັບການແຕ່ງຕັ້ງໂດຍກະຊວງການເງິນ.

### ມາດຕາ 29 ຄວາມລັບທາງດ້ານວິຊາຊີບ

ສະມາຊິກພາຍໃນໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງຮັກສາຄວາມລັບທາງດ້ານວິຊາຊີບ, ຫ້າມນຳໃຊ້ຂໍ້ມູນຂ່າວສານລັບ ທີ່ໄດ້ມາຈາກການດຳເນີນວຽກງານການທົບທວນຄືນ ຫຼື ໃຊ້ໜ້າທີ່ ເພື່ອຜົນປະໂຫຍດຂອງບຸກຄົນໃດໜຶ່ງ ຫຼື ຫົວໜ່ວຍວິສາຫະກິດ ທີ່ບໍ່ກ່ຽວຂ້ອງກັບການທົບທວນຄືນ.

**ມາດຕາ 30 ການເຂົ້າເຖິງເອກະສານ ຂອງວິສາຫະກິດກວດສອບທີ່ຖືກທົບທວນຄືນ ແລະ ການຮັກສາຂໍ້ມູນ**

ຜູ້ທົບທວນຄືນ ມີສິດໃນການເຂົ້າເຖິງເອກະສານ ຂອງວິສາຫະກິດກວດສອບ ດັ່ງນີ້:

1. ສັງລວມເອົາເອກະສານທັງໝົດ, ໃນທຸກຮູບແບບ ແລະ ການອະທິບາຍ ຊີ້ແຈງທີ່ຈຳເປັນ ຕໍ່ກັບການທົບທວນຄືນ;

2. ກວດກາຄວາມຖືກຕ້ອງຂອງເອກະສານ ຫຼື ຫຼັກຖານທັງໝົດໃນການທົບທວນຄືນ ທຸກຮູບແບບ ເຊັ່ນ: ສະບັບສຳເນົາ ຫຼື ເອເລັກໂຕຣນິກ;

3. ເອົາສຳເນົາເອົາເອກະສານ ແລະ ອຸປະກອນທີ່ເປັນຫຼັກຖານ ທຸກຮູບແບບທີ່ກ່ຽວຂ້ອງກັບການທົບທວນຄືນ;

4. ກວດກາການສະເໜີຂອງວິສາຫະກິດກວດສອບທີ່ຖືກທົບທວນຄືນ ແລ້ວກຳນົດເງື່ອນໄຂ ແລະ ຂັ້ນຕອນ ເພື່ອຮັບປະກັນການຮັກສາຄວາມລັບສະເພາະໃນຮູບລັກສະນະ ທີ່ຍັງສະຫງວນຜົນປະໂຫຍດຂອງວິສາຫະກິດ ໃນກໍລະນີເອກະສານທີ່ໄດ້ທົບທວນຄືນ ຫາກພົວພັນກັບຍຸດທະສາດຂອງວິສາຫະກິດ ຫຼື ນະໂຍບາຍທຸລະກິດ ທີ່ອາດເປັນຄວາມລັບ ຫຼື ເປັນຂໍ້ມູນທີ່ລະອຽດອ່ອນ.

ວິສາຫະກິດກວດສອບທີ່ຖືກທົບທວນຄືນ ມີພັນທະໃນການສະໜອງເອກະສານ ດັ່ງນີ້:

1. ສ້າງບັນຊີລາຍການເອກະສານ ແລະ ຫຼັກຖານ ສຳເນົາແລ້ວເຮັດສະໂນດນຳສົ່ງໃຫ້ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ແລະ ພ້ອມກັນລົງລາຍເຊັນ ໃສ່ບັນຊີລາຍການເອກະສານ;

2. ສະໜອງເອກະສານທີ່ອາດເປັນຄວາມລັບ ຫຼື ເປັນຂໍ້ມູນທີ່ລະອຽດອ່ອນ ແລະ ສະເໜີໃຫ້ຜູ້ທົບທວນຄືນ ຮັກສາຄວາມລັບ;

3. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ກັບຜູ້ທົບທວນຄືນ.

**ມາດຕາ 31 ການສັງລວມເອກະສານ**

ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ຕ້ອງສັງລວມເອກະສານທີ່ກ່ຽວຂ້ອງດັ່ງນີ້:

1. ເອກະສານທີ່ເປັນຫຼັກຖານໃນການເຮັດບົດລາຍງານ ການທົບທວນຄືນການຮັບປະກັນຄຸນນະພາບ;

2. ເອກະສານຢັ້ງຢືນການປະຕິບັດການທົບທວນຄືນ ການຮັບປະກັນຄຸນນະພາບ ສອດຄ່ອງກັບ ກົດໝາຍວ່າດ້ວຍ ການກວດສອບອິດສະລະ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

ໜ່ວຍງານທົບທວນຄືນການຮັບປະກັນຄຸນນະພາບ ຕາມການຊີ້ນຳຂອງຫົວໜ້າໜ່ວຍງານ ຕ້ອງຮັກສາເອກະສານ ທີ່ໄດ້ຈາກການປະຕິບັດວຽກງານທົບທວນຄືນ ຊຶ່ງລວມມີ ຜົນການທົບທວນຄືນ, ຄຳແນະນຳ ແລະ ການສະຫຼຸບ.

**ມາດຕາ 32 ການລາຍງານ ການດຳເນີນການ ແລະ ຜົນຂອງການທົບທວນຄືນການຮັບປະກັນຄຸນນະພາບການກວດສອບ**

ການດຳເນີນການທົບທວນຄືນຄຸນນະພາບການກວດສອບ ຕ້ອງມີການແລກປ່ຽນຄຳຄິດເຫັນ ລະຫວ່າງສະມາຊິກຂອງວິສາຫະກິດກວດສອບ ທີ່ຖືກທົບທວນຄືນ ແລະ ໜ່ວຍງານທົບທວນຄືນ.

ຜູ້ທົບທວນຄືນ ຕ້ອງເຮັດວຽກຮ່ວມກັບບັນດາຜູ້ຮຸ້ນສ່ວນຮັບຜິດຊອບງານ ຂອງວິສາຫະກິດກວດສອບຖືກທົບທວນຄືນ. ຜູ້ທົບທວນຄືນ ຍັງອາດຈະສົມທົບກັບຜູ້ຮຸ້ນສ່ວນບໍລິຫານ, ຜູ້ຈັດການ ຫຼື ພະນັກງານ ອື່ນໆຂອງວິສາຫະກິດກວດສອບ, ຫຼື ກັບບຸກຄົນພາຍນອກ ຜູ້ທີ່ເປັນສະມາຊິກຂອງໜ່ວຍງານກວດສອບ ທີ່ປະກອບສ່ວນດຳເນີນວຽກງານກວດສອບ ທີ່ຖືກຊີ້ນຳໂດຍຜູ້ຮຸ້ນສ່ວນບໍລິຫານ ຫຼື ຜູ້ຈັດການດັ່ງກ່າວນັ້ນ.

ຜູ້ທົບທວນຄືນ ຕ້ອງກະກຽມຮ່າງບົດລາຍງານ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ນັບຈາກມື້ສຳເລັດການທົບທວນຄືນ ເພື່ອສົ່ງໃຫ້ວິສາຫະກິດກວດສອບ ປະກອບຄຳເຫັນ.

ວິສະຫະກິດກວດສອບ ທີ່ຖືກທົບທວນຄືນ ຕ້ອງປະກອບຄຳເຫັນເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບ ວັນ ນັບແຕ່ມື້ໄດ້ຮັບຮ່າງບົດລາຍງານ. ກໍລະນີ ວິສາຫະກິດກວດສອບ ມີຄວາມຈຳເປັນຂໍເລື່ອນເວລາປະກອບຄຳເຫັນ ຕ້ອງສະເໜີເປັນລາຍລັກອັກສອນ ເຖິງຜູ້ທົບທວນຄືນ ກ່ອນກຳນົດເວລາສິ່ງ ຢ່າງໜ້ອຍ ຫ້າ ວັນ.

ຮ່າງບົດລາຍງານພ້ອມດ້ວຍເອກະສານຊ້ອນທ້າຍ ແລະ ຄຳເຫັນຂອງວິສາຫະກິດກວດສອບ ທີ່ຖືກທົບທວນຄືນ, ຕ້ອງສົ່ງໃຫ້ສະມາຊິກໃນຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ທີ່ເປັນອົງການຄຸ້ມຄອງບັນດາຫົວໜ່ວຍທຸລະກິດທີ່ຖືກກວດສອບ ໂດຍວິສາຫະກິດກວດສອບທີ່ຖືກທົບທວນຄືນ.

ການສ້າງບົດລາຍງານທົບທວນຄືນ ຕ້ອງປັບປຸງຕາມຄຳເຫັນທີ່ເປັນເອກະພາບກັນ. ຖ້າຈຳເປັນ ຄຳເຫັນຂອງອົງການຄຸ້ມຄອງ ຕ້ອງສັງລວມເຂົ້າໃນເອກະສານຊ້ອນທ້າຍຂອງບົດລາຍງານ.

ຜູ້ທົບທວນຄືນ ຕ້ອງສົ່ງບົດລາຍງານທົບທວນຄືນ ພ້ອມດ້ວຍເອກະສານຊ້ອນທ້າຍ ໃຫ້ຜູ້ຕາງໜ້າວິສາຫະກິດກວດສອບ ພາຍໃນກຳນົດເວລາ ເກົ້າສິບ ວັນ ນັບຈາກມື້ໄດ້ຮັບການປະກອບຄຳເຫັນຂອງວິສາຫະກິດກວດສອບ.

ຜູ້ທົບທວນຄືນ ຕ້ອງສົ່ງບົດລາຍງານ ໃຫ້ສະມາຊິກທຸກຄົນຂອງຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

ຜົນການທົບທວນຄືນ ແລະ ຄຳເຫັນ ຕ້ອງລວມເຂົ້າໃນບົດລາຍງານການເຄື່ອນໄຫວ ຂອງແຜນການຕິດຕາມກວດກາ.

**ມາດຕາ 33 ການຕິດຕາມຜົນຂອງການທົບທວນຄືນການຮັບປະກັນຄຸນນະພາບ**

ກົມບັນຊີ ກະຊວງການເງິນ ໃຫ້ຄຳແນະນຳດ້ານວິຊາການຕໍ່ວິສາຫະກິດກວດສອບທີ່ຖືກທົບທວນຄືນ ຖ້າຈຳເປັນ.

ກົມບັນຊີ ຕິດຕາມກວດກາ ການປະຕິບັດຄຳແນະນຳຜົນຂອງການທົບທວນຄືນການຮັບປະກັນຄຸນນະພາບ ເພື່ອຮັບປະກັນວ່າວິສາຫະກິດກວດສອບທີ່ຖືກທົບທວນຄືນ ໄດ້ປັບປຸງແກ້ໄຂຂໍ້ຄົງຄ້າງຂອງຕົນ.

## ໝວດທີ 7
## ການສຶກສາອົບຮົມ

**ມາດຕາ 34 ການສຶກສາອົບຮົມ**

ການສຶກສາອົບຮົມ ແມ່ນ ມາດຕະການປັບປຸງຄຸນນະພາບວຽກງານກວດສອບ ຕໍ່ນັກກວດສອບຕາມກົດໝາຍ ດັ່ງນີ້:

1. ຜູ້ທີ່ປະຕິບັດກົດໝາຍ ວ່າດ້ວຍ ການກວດສອບອິດສະລະ, ຈັນຍາບັນ ແລະ ມາດຕະຖານວິຊາຊີບບໍ່ຄົບຖ້ວນ ຫຼື ສ່ວນໃດສ່ວນໜຶ່ງ ຕາມແຕ່ກໍລະນີ;

2. ຜູ້ທີ່ໄດ້ຮັບຄຳແນະນຳ ໃຫ້ເຂົ້າຮ່ວມໃນການຝຶກອົບຮົມໃນຫົວຂໍ້ສະເພາະ ຕາມຜົນຂອງການທົບທວນຄືນການຮັບປະກັນຄຸນນະພາບ ເພື່ອໃຫ້ສາມາດປະຕິບັດປະຕິບັດວຽກງານ ຂອງເຂົາເຈົ້າໃຫ້ຖືກຕ້ອງກັບກົດໝາຍ ວ່າດ້ວຍ ການກວດສອບອິດສະລະ, ຈັນຍາບັນ ແລະ ມາດຕະຖານວິຊາຊີບ;

3. ຜູ້ທີ່ຖືກມາດຕະການສຶກສາອົບຮົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 88 ຂອງກົດໝາຍ ວ່າດ້ວຍການກວດສອບອິດສະລະ.

**ມາດຕາ 35 ການດຳເນີນການສຶກສາອົບຮົມ**

ການດຳເນີນການສຶກສາອົບຮົມ ຕ້ອງມີຫຼັກສູດຝຶກອົບຮົມສະເພາະ ເພື່ອຊ່ວຍນັກກວດສອບມີສ່ວນຮັບຜິດຊອບເປັນເຈົ້າການໃນການປະຕິບັດ ກົດໝາຍ ວ່າດ້ວຍ ການກວດສອບອິດສະລະ, ຈັນຍາບັນ, ມາດຕະຖານວິຊາຊີບ.

ການເຂົ້າຮ່ວມຝຶກອົບຮົມ ແລະ ການດຳເນີນການສຶກສາອົບຮົມ ຕ້ອງໄດ້ຮັບການກວດກາຕິດຕາມ ຈາກສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

**ມາດຕາ 36 ພັນທະຂອງນັກກວດສອບຕາມກົດໝາຍທີ່ຖືກສຶກສາອົບຮົມ**

ນັກກວດສອບຕາມກົດໝາຍ ທີ່ຖືກສຶກສາອົບຮົມ ຕ້ອງເຂົ້າຮ່ວມການຝຶກອົບຮົມ ທີ່ໄດ້ກຳນົດ ໃຫ້ເຂົ້າຮ່ວມ.

ນັກກວດສອບຕາມກົດໝາຍ ທີ່ຖືກສຶກສາອົບຮົມ ຕ້ອງໃຫ້ການຮ່ວມມືກັບຜູ້ສຶກສາອົບຮົມ ທີ່ຖືກແຕ່ງຕັ້ງໂດຍສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໃນການຕິດຕາມກວດກາການແກ້ໄຂຂໍ້ຄົງຄ້າງ ທີ່ຈຳເປັນ ສຳລັບການຈັດຕັ້ງປະຕິບັດລະບຽບກົດໝາຍ.

**ມາດຕາ 37 ການລາຍງານການສຶກສາອົບຮົມ**

ການດຳເນີນງານການສຶກສາອົບຮົມ ຕ້ອງລະບຸລາຍລະອຽດ ໃນບົດລາຍງານການເຄື່ອນໄຫວຂອງແຜນການຕິດຕາມກວດກາ.

## ໝວດທີ 8
## ຄະນະກຳມະການທີ່ປຶກສາ ລະບົບຮັບປະກັນຄຸນນະພາບວຽກງານກວດສອບ

**ມາດຕາ 38 ໂຄງປະກອບຂອງຄະນະກຳມະການທີ່ປຶກສາ**

ຄະນະກຳມະການທີ່ປຶກສາ ປະກອບດ້ວຍ ຜູ້ຕາງໜ້າຈາກແຕ່ລະອົງການຄຸ້ມຄອງ ໃນຂະແໜງການກ່ຽວຂ້ອງ ທີ່ຖືກກຳນົດໃນລະບຽບການດ້ານການກວດສອບ ໂດຍການເປັນປະທານຂອງຮອງລັດຖະມົນຕີກະຊວງການເງິນ ຜູ້ຊີ້ນຳວຽກງານດັ່ງກ່າວ ແລະ ຫົວໜ້າກົມບັນຊີ ເປັນຮອງປະທານ. ແຕ່ລະອົງການຄຸ້ມຄອງທີ່ກ່ຽວຂ້ອງເປັນຜູ້ສະເໜີ ແຕ່ງຕັ້ງ ຫຼື ປົດຕົວແທນຂອງຕົນ ໃນການເປັນສະມາຊິກຂອງຄະນະກຳມະການທີ່ປຶກສາດັ່ງກ່າວ, ຊຶ່ງປະກອບມີ ກົມບັນຊີ, ກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ, ກົມສ່ວຍສາອາກອນກະຊວງການເງິນ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານແຫ່ງ ສປປ ລາວ, ອົງການກວດສອບແຫ່ງລັດ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ບຸກຄົນທີ່ມີຄວາມຮູ້ ໃນຂົງເຂດກ່ຽວຂ້ອງກັບການກວດສອບຕາມກົດໝາຍ.

ກົມບັນຊີ ກະຊວງການເງິນ ຮັບຜິດຊອບເປັນກອງເລຂາຂອງຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

**ມາດຕາ 39 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ແມ່ນ ການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກກະຊວງການເງິນ ທີ່ເປັນເຈົ້າການປະສານສົມທົບ ຕາມທີ່ໄດ້ກຳນົດໃນ

ມາດຕາ 78 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ, ມີພາລະບົດບາດ ໃນການປະສານງານນຳອົງການຄຸ້ມຄອງ ໃນຂົງເຂດການດຳເນີນວຽກງານກວດສອບ ເພື່ອສະໜອງຂໍ້ມູນຂ່າວສານ, ໃຫ້ຄຳປຶກສາ ແລະ ຄຳແນະນຳ ກ່ຽວກັບ ການຮັບປະກັນຄຸນນະພາບວຽກງານກວດສອບ ບົນພື້ນຖານຫຼັກການໃນການຮັກສາຄວາມລັບ.

**ມາດຕາ 40 ສິດ ແລະ ໜ້າທີ່ຂອງຄະນະກຳມະການທີ່ປຶກສາ**

ຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນພາບວຽກງານກວດສອບ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ໃຫ້ຄຳປຶກສາ, ຄຳແນະນຳ ໃນການຄົ້ນຄ້ວາ ແລະ ປັບປຸງແຜນການຕິດຕາມກວດກາຄຸນນະພາບວຽກງານກວດສອບ ເພື່ອນຳສະເໜີ ລັດຖະມົນຕີກະຊວງການເງິນ ຮັບຮອງ;
- ສະໜອງຂໍ້ມູນຂ່າວສານກ່ຽວກັບການກວດສອບ ຂອງວິສາຫະກິດກວດສອບ ໃນຂະແໜງການຂອງຕົນຄຸ້ມຄອງ;
- ສຶກສາຄົ້ນຄວ້າ, ແລກປ່ຽນຂໍ້ມູນຂ່າວສານພາຍໃນຄະນະກຳມະການ ເພື່ອເປັນບ່ອນອີງໃນການປັບປຸງປັດໄຈຄຸນນະພາບການກວດສອບ ແລະ ລະບຽບກົດໝາຍດ້ານການກວດສອບອິດສະລະ;
- ເຂົ້າຮ່ວມໃນການເຄື່ອນໄຫວກວດກາຄຸນນະພາບ ຕາມການມອບໝາຍຂອງກະຊວງການເງິນ;
- ສັງລວມລາຍງານສະພາບການເຄື່ອນໄຫວ ຂອງຄະນະກຳມະການທີ່ປຶກສາ ໃຫ້ກະຊວງການເງິນ ຢ່າງເປັນປົກກະຕິ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງການເງິນ.

ການປະຕິບັດງານ ຂອງຄະນະກຳມະການທີ່ປຶສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ ຈະຖືກກຳນົດໄວ້ໃນບົດບັນທຶກການຮ່ວມມື ທີ່ຮ່າງຂຶ້ນໂດຍກົມບັນຊີ ກະຊວງການເງິນ ແລະ ຖືກຮັບຮອງໂດຍຜູ້ຕາງໜ້າແຕ່ລະອົງການຄຸ້ມຄອງ ທີ່ນອນໃນຄະນະກຳມະການທີ່ປຶກສາ ລະບົບການຮັບປະກັນຄຸນນະພາບວຽກງານກວດສອບ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງ ແລະ ກວດກາວຽກງານກວດສອບອິດສະລະ, ວິສາຫະກິດກວດສອບ, ນັກກວດສອບຕາມກົດໝາຍ, ເປົ້າໝາຍຖືກກວດສອບ ແລະ ອົງການຄຸ້ມຄອງອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ພາຍໃນ ສິບຫ້າ ວັນ.

**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ